# ສິດທິປະຊາ

## ສຽງຂະບວນການລາວເພື່ອສິດທິມະນຸດ

*ວາຣະສານ ຂລສມ ປະຈຳເດືອນ ຕຸລາ 2005* – www.mldh-lao.org


# ຄົບຮອບ6ປີ ວິຣະກັມ"ຂະບວນ26 ຕຸລາ"


Thongpaseuth Keuakoun


SengAroun Phengphanh


Khamphouvieng Sisaath


Bouavanh Chanmanivong


Keochay

ທ່ານຄຳພູວຽງ ສີສະອາດ ເສັຽຊີວິດໃນຄຸກຊຳເຄ້ ຍ້ອນຖືກທໍຣະມານແລະຂາດການປິ່ນປົວ.
*ທ່ານ ທອງປະເສີດ ເກື້ອກູນ, ທ່ານ ແສງອະຣຸນ ເພງພັນ, ທ່ານ ບົວວັນ ຈັນມະນີວົງແລະ ທ່ານ ແກ້ວໃຈ ຍັງມີຊີວິດ ທຸກຄົນບໍ ?* ມີແຕ່ຜູ້ນຳພັກໂທນຜະເດັດການ ທີ່ຮູ້ຄຳຕອບ.











ທົບທວນບົດບາດ ວິຣະກັມ ນັກເຄື່ອນໄຫວເພື່ອປະຊາທິປະໄຕ ຊາວຢູໂຣບຫ້າທ່ານ --ອັນມີ ທ່ານຜູ້ແທນ ໂອລີວິເອ ດູປຍ, ທ່ານບຣູໂນ ແມນລາໂນ, ຍານາງຊິລເວັຽ ມັນຊີ, ທ່ານນິໂກລາຍ ກຣາໂມຟ ແລະ ທ່ານມັດຊີໂມ ແລນຊີ-- ທີ່ໄດ້ ເປີດປະທ້ວງແບບສັນຕິວິທີໃນວັນທີ່ 26 ຕຸລາ 2001 ທີ່ວຽງຈັນແລະວິທະຍາໄລດົງໂດກ ຮຽກຫວງການປ່ອຍຕົວຜູ້ນຳຂະບວນ 26 ຕຸລາ, ຮຽກຫວງ ການປ່ຽນແປງແທ້ຈິງ ສູ່ເສຣີພາບ, ປະຊາທິປະໄຕ, ຍຸຕິທັມທາງສັງຄົມ ແລະ ຄວາມຖືກຕ້ອງປອງດອງຊາດ ໃນລາວ.

## ປະທ້ວງ25ມິຖຸນາແລະ24ກັນຍາ: ຈົ່ງຊ່ວຍກູ້ຊີວິດຊາວລາວມົ້ງເຂດໄຊສົມບູນ!


ສາຣະບານ: ບົດບັນນາທິການ "ນ້ຳໃຈ 26 ຕຸລາ" : ຜູ້ແທນຢູໂຣບຮຽກການປ່ອຍຕົວ ທ່ານທອງປະເສີດ ເກື້ອກູນ ແລະຄນະ-ປະທ້ວງ ວັນທີ່25/06/05 ແລະ24/09/05 ທີ່ນະຄອນຫຼວງປາຣີເພື່ອ "ຊ່ວຍຊີວິດຊາວລາວມົ້ງໄຊສົມບູນ" - ຂ່າວການເຄື່ອນໄຫວ ຂລສມ: ຊຸມນຸມປະທ້ວງທີ່ເມືອງຕູແຣງແລະແຊນ (ອີຕາລີ) - ສາຣະຄະດີ: *"ກະແສຟອງປະຊາທິປະໄຕຍັງສືບຕໍ່ໃນໂລກ"*.

# <u>ບັນນາທິການ</u>: "ນ້ຳໃຈ 26 ຕຸລາ – ແສງ ທຽນ ແຫ່ງ ຄວາມ ຫວັງ"

ທ່ານ ຜູ້ອ່ານ ທີ່ ນັບຖື,

ມື້ນີ້ ເພື່ອໝາຍ ວັນຄົບຮອບ 6 ປີ ຂອງ ເຫດການ ສຳຄັນ ຂອງ ຂະບວນ 26 ຕຸລາ 1999, ເພື່ອ ຄຳນັບ ແລະ ທົບທວນເຖິງວິລະກັມ ແລະການເສັຽສະລະຂອງຜູ້ນຳ 26 ຕຸລາ 1999 ແລະ ເພື່ອ ລະລຶກເຖິງ ການເສັຽ ຊີວິດ ຂອງທ່ານຄຳພູ ວຽງ ສີສະອາດ ໃນ ຄຸກ ຊຳເຄ, ຜູ້ເຫັນ ສະພາຮວມ ເອີໂຮນໃດ ສົ່ງສານຮຽກຮ້ອງ ໃຫ້ທາງການ ສ ປ ປ ລ ປ່ອຍຕົວຜູ້ນຳ 26 ຕຸລາ 1999 ແລະ ນັກໂທດ ການເມືອງ ທຸກ ຄົນ, ພ້ອມທັງ ຂໍ ໃຫ້ ຢຸດ ການ ຂ້າລ້າງ ຊາວ ລາວ-ມົ້ງ ໃນ ເຂດ ໄຊສົມບູນ - ບໍລິຄຳໄຊ ແລະ ຢຸດ ການ ປາບປາມ ຊາວ ລາວ ທີ່ ເຊື່ອ ຖື ສາສນາ ພະເຍຊູ.

ມື້ ນີ້ ວັນພຸດ ວັນທີ 26 ຕຸລາ 2005, ເປັນວັນຄົບຮອບ 6 ປີ ຂອງ ຂະບວນ 26 ຕຸລາ ອັນໝາຍ ເຖິງ ບົດບາດ ອັນພິລະ ອາດຫານ ຂອງບັນດາ ນັກຮຽນ ນັກສຶກສາ ອາຈານ ພະນັກງານຫລວງ ແລະ ປະຊາຊົນທີ່ໄດ້ຮ່ວມແຮງຮ່ວມໃຈເປັນພະລັງ ເປີດເດີນຂະບວນຮຽກຮ້ອງເອົາ ເສຣີພາບ ປະຊາທິປະໄຕ, ສິດທິມະນຸດ ຍູຕິທັມທາງສັງຄົມພ້ອມທັງປະນາມການບໍຣິຫານແບບສໍ້ລາດ ຂາດສົນທັມຂອງຜູ້ນຳພັກໂທນ. ກະແສຟອງເສຣີພາບດັ່ງກ່າວໄດ້ຖືກປາບປາມຢ່າງຮຸນແຮງຈາກຜູ້ນຳພັກລັດທີ່ ໄດ້ທຳການຈັບກູມຄະນະປະທ້ວງບໍ່ຕ່ຳ ກົ່ວ 100 ທ່ານ ພ້ອມທັງ ຊອກປົກປິດ ເຫດການ ໄວ້ເປັນ ຄວາມ ລັບ.

ໃນຈຳນວນຜູ້ຖືກຈັບ ກໍ່ມີຄນະຜູ້ນຳຂະບວນສ່ວນນຶ່ງ ຄື ທ່ານທອງປະເສີດ ເກື້ອກູນ ທ່ານ ແສງອາລຸນ ແພງພັນ, ທ່ານ ຄຳພູ ວຽງ ສີສະອາດ, ທ່ານບົວວັນ ຈັນມະນີວົງ ແລະ ທ່ານ ເກົວໃຈ. ໄດ້ 6 ປີ ມາແລ້ວ ທີ່ ນັກສູ້ເພື່ອປະຊາ ທິປະໄຕ ຈຳນວນນີ້ ຖືກຄູມຂັງຢ່າງທາລູນ ຈົນ ທ່ານຄຳພູ ວຽງ ສີສະອາດ ໄດ້ເສັຽຊີວິດ ທີ່ ຄຸກຊຳເຄ ທັງໆ ທີ່ ທາງການ ສ ປ ປ ລາວ ໄດ້ປະກາດ ມາສເມີ ວ່າ " *ບໍ່ ຮູ້ ບໍ່ ເຫັນ ບໍ່ ໄດ້ຍິນ* " ເຖິງເຫດການ 26 ຕຸລາ.

ແຕ່ເຖິງວ່າ ຜູ້ນຳ ສປປລຈະພະຍາຍາມປົກປິດ ມິດງຽບຂະບວນດັ່ງກ່າວບົດບາດຂອງຊາວ ລາວ ທີ່ ຮັກຊາດ, ຮັກເສຣີພາບ ຂອງວັນທີ 26 ຕຸລາ 1999 ກໍ່ໄດ້ພຸ່ງພົ້ນອອກເພື່ອກາຍເປັນ ສັນຍາລັກ ແລະ ເປັນ *ແສງທຽນແຫ່ງຄວາມຫວັງ* ສຳລັບຊາວລາວ ທັງໃນແລະນອກປະເທດ ທີ່ ເຄື່ອນ ໄຫວຮຽກຮ້ອງການຫັນປ່ຽນ ສູ່ເສຣີພາບ, ປະຊາທິປະໄຕ ແລະ ຄວາມປອງດອງຊາດ.

30 ປີ ຫລັງຈາກ ປົກຄອງປະເທດໃນຣະບອບພັກໂທນ, ສະມັດຊາ ໃຫຍ່ຄັ້ງ ທີ 8 ຂອງພັກ ປະຊາ ຊົນປະຕິວັດລາວ ທີ່ຈະມີຂຶ້ນໃນຕົ້ນ ປີ 2006 ຈະນຳການປ່ຽນແປງອັນໃດ ແດ່ເພື່ອປະຊາຊົນລາວ ແລະ ອານາຄົດຂອງຊາດ ? ກົດໝາຍຕ່າງໆ ທີ່ຣະບຸໄວ້ຈະຖືກນຳມາປະຕິບັດ ຈາກຜູ້ນຳ ປະເທດບໍ່ ? ສະມັດຊາ ໃຫຍ່ຄັ້ງນີ້ ຈະສາມາດຫັນມາຮັບໃຊ້ ອານາຄົດຂອງຊາດລາວ ແລະ ປະຊາຊົນບໍ່ ? ຫລືຈະງົມງາວປົກຄອງປະເທດແບບ "ຄົນຮັ່ງບໍ່ໄດ້ເຂົ້າຄຸກ, ຄົນທຸກບໍ່ ໄດ້ເຂົ້າ ໂຮງໝໍ", ຂາດສົນທັມ ຂາດສິດເສຣີພາບ ຂາດສິດທິ ມະນຸດ ຂາດຫລັກ ປະຊາທິປະໄຕຕໍ່ ໄປ ? ຈະ ຕໍ່ ໄປ ໄດ້ຮອດ ອີກມື້ ໃດ?

<u>*ໂດຍ: ວານິດາ ເທພສຸວັນ, ປະທານ ຂ.ລ.ສ.ມ.*</u>

## ປະທ້ວງໃຫຍ່ 25 ມິຖຸນາແລະ 24 ກັນຍາທີ່ນະຄອນປາຣີ:

# *"ຈົ່ງຊ່ວຍຊີວິດພີ່ນ້ອງລາວມົ້ງ ທີ່ເຂດໄຊສົມບູນ"*




## <u>ສານປະທ້ວງ</u>

ການອອກຂ່າວຂອງໂທຣະທັດລັດຊ່ອງສອງຂອງຝຣັ່ງ ໃນມື້ແລງຂອງວັນທີ 16 ມິຖຸນາ 2005 ທີ່ຜ່ານມາກ່ຽວກັບ "ສົງຄາມລັບໃນປະເທດລາວ" ໄດ້ເປີດເຜີຍສູ່ມວນຊົນທົ່ວໄປໃຫ້ຮູ້ເຖິງຄວາມໂຫດຮ້າຍຂອງຜູ້ນຳພັກໂທນສປປລາວ ທີ່ໄດ້ເປີດນະໂຍບາຍ ຢ່າງບັງອາດ ບໍ່ຢ້ານຄວາມຜິດ ເພື່ອກຳຈັດປະຊາຊົນລາວເຜົ່າມົ້ງມາໄດ້ເກືອບ 30 ປີແລ້ວ ໂດຍການສັງຫານໂຫດ, ຂ້າລ້າງໂຄດຊົນເຜົ່າ ນັບເປັນຈຳນວນພັນໆຄົນ ທີ່ລີ້ອາສັຍ ຢູ່ໃນພູຜາປ່າຕຶບເຂດພິເສດໄຊສົມບູນແລະບໍຣິຄຳໄຊ. ພາບຂອງປະຊາຊົນລາວເຫຼົ່ານີ້ ຊຶ່ງປະກອບດ້ວຍຜູ້ເຖົ້າແກ່, ຍິງຊາຍ, ຜູ້ເລັກເດັກແດງ ທີ່ຖືກທະຫານສປປລາວໄລ່ຕາມລ້າ ເຂັ່ນຂ້າ,ໃຊ້ຊີວິດໃນຄວາມຢ້ານກົວເປັນປະຈຳ, ເປັນພະຍາດ, ຂາດທຸກສິ່ງ ທຸກຢ່າງທີ່ຈຳເປັນ, ຕົກຢູ່ໃນສະພາບສິ້ນຄວາມຫວັງ, ໄດ້ນຳຄວາມສະທ້ານໃຈແລະຄວາມເຈັບຊ້ຳໜໍາໃຈແກ່ທຸກຄົນທີ່ເຫັນລາຍການໃນ ຄືນມື້ນັ້ນ. ແຕ່ລະຄົນຍັງໄດ້ຕັ້ງຄຳຖາມອີກວ່າ ເຫດສັນໃດເຫດການອັນໜ້າທຸເຣດນີ້ເກີດເປັນໄປໄດ້ ໃນປະເທດທີ່ເປັນພາຄີຂອງກຸ່ມປະເທດທີ່ໃຊ້ພາສາຝຣັ່ງເສດ, ເປັນສະມາຊິກ ຂອງສະຫະປະຊາຊາດ, ພ້ອມຍັງໄດ້ເຊັນສັນຍາຮ່ວມມື ກັບສະຫະພາບຢູຣົບໃນເດືອນເມສາ 1997, ໂດຍຖືເອົາການເຄົາຣົບແລະນັບຖືສິດທິມະນຸດຊົນເປັນເງື່ອນໄຂຕົ້ນຕໍສຳຄັນ?

ອີງຕາມຮູບພາບດັ່ງກ່າວ --ຊຶ່ງຈຳຕ້ອງຖ່າຍທຳແບບລັບໃນພື້ນທີ່ ເພາະສປປລາວຍັງເປັນປະເທດ ທີ່ຂາດສິດທຸກຢ່າງໃນການປາກເວົ້າຂີດຂຽນ-- ທາງການສປປລາວ ປະຕິເສດວ່າຊາວຊົນລາວມົ້ງ ທີ່ຍັງຝ່າຝືນຕໍ່ພັກ-ລັດ ຊຶ່ງນັກຂ່າວຝຣັ່ງ .ທ່ານ ກະຣໂກ໊ວ ເດີນີໂອ ນຳມາເປັນຂ່າວນີ້ *"ບໍ່ມີເລີຍ"* ແລະເປັນພຽງ *"ພວກຊາວບ້ານທີ່ ກຳລັງຍົກຍ້າຍທີ່ຢູ່ເທົ່ານັ້ນເອງ"*. ນັບແຕ່ປີ 1975, ນະໂຍບາຍຂອງຜູ້ນຳລະບອບແມ່ນໃຊ້ໃບໜ້າອັນຍິ້ມແຍ້ມແຈ່ມໃສ ຕໍ່ບັນດາຕ່າງປະເທດ ເພື່ອຕົບຕາຂໍຄວາມຊ່ວຍເຫລືອແລະດຶງດູດນັກທ່ອງທ່ຽວ, ແຕ່ພາຍໃນປະເທດແລ້ວ ແມ່ນກຳຈັດຮັດເໜັ້ນພວກທີ່ບໍ່ເຫັນພ້ອມໃນແນວທາງພັກ-ລັດແລະປິດປະຕູປະຕິເສດການປະຕິຮູບສູ່ປະຊາທິປະໄຕ. ຮູບພາບທໍຣະທັດຝຣັ່ງຍັງ ແຈ້ງໃຫ້ຮູ້ອີກວ່າໃນຈຳນວນຜູ້ຖືກເຄາະຮ້າຍນີ້, ຍັງມີນັກຮົບເກົ່າຂອງສະຫະພັນຝຣັ່ງເສດທີ່ເຄີຍຮ່ວມສູ້ຮົບໃນສມໍຣະພູມດຽນບຽນຟູ

ເມື່ອປີ1954 ແລະສ່ວນນຶ່ງອີກກໍຍັງເຄີຍຮ່ວມໃນການຕໍ່ສູ້ຄຽງຄູ່ກັບກອງທັບອະເມຣິກັນໃນປາງສົງຄາມວຽດນາມ. ບຸກຄົນເຫຼົ່ານີ້ກຳລັງໄດ້ຮັບຄວາມເດືອດຮ້ອນ ທໍຣະມານແສນສາຫັດ ຢູ່ຮ່ວມກັນກັບລູກຫລານເຫລັນ  ໃນປ່າເຂດໄຊສົມບູນ.



ຊາວລາວແລະຊາວຕ່າງປະເທດເກືອບພັນຊຸມນຸມປະທ້ວງ



ປະທານຂລສມເປີດປະທ້ວງຮຽກການຊ່ວຍເຫຼືອສາກົນ

ຕໍ່ໜ້າສະພາບການທີ່ເຫລືອທົນ  ແລະໂດຍຄວາມເຈັບແຄ້ນແໜ້ນໃຈ  ຕໍ່ການປະພຶດອັນໂຫດຮ້າຍ  ຕໍ່ປະຊາຊົນ  ທີ່ບໍ່ມີຄວາມ ຜິດຫຍັງ, ພວກຂ້າພະເຈົ້າທີ່ຮັບລົງລາຍເຊັນໃນຂ້າງລຸ່ມຂອງສານປະທ້ວງສະບັບນີ້ :

- ຂໍຮຽກຮ້ອງ  ບັນດາຜູ້ນຳສປປລາວ  ຈົ່ງໄດ້ຍຸດຕິທັນທີໃນການປາບປາມຕໍ່ພີ່ນ້ອງລາວາມົ້ງແລະຮັບຮູ້ຢ່າງເປີດແປນ ເຖິງສະພາບຄວາມເປັນຈິງ ຂອງບຸກຄົນດັ່ງກ່າວ.
- ຮ້ອງຂໍຕໍ່ເຈົ້າໜ້າທີ່ສປປລາວຈົ່ງໄດ້ອະນຸຍາດ,  ໂດຍບໍ່ມີເງື່ອນໃຂແລະໂດຍປາສຈາກການຊັກຊ້າ,  ໃຫ້ອົງການສາກົນ ໄດ້ເຂົ້າໄປໃຫ້ການຊ່ວຍເຫລືອດ້ານມະນຸສທັມ ຢ່າງຮີບດ່ວນ ແກ່ຊາວຊົນດັ່ງກ່າວ.
- ຮ້ອງຂໍຕໍ່ສະຫາປະຊາຊາດ, ໂດຍສະເພາະ ເລຂາທິການໃຫຍ່ຂອງອົງການ ທ່ານ ໂກຟີ ອານັນ, ຈົ່ງໄດ້ເອົາມາຕະການ ທີ່ ເໝາະສົມ ເພື່ອຊ່ວຍຊີວິດພີ່ນ້ອງລາວເຜົ່າມົ້ງ ກ່ອນທີ່ຈະສວາຍເກີນໄປ.
- ຮ້ອງຂໍຕໍ່ປະທານນະທິບໍດີຝຣັ່ງເສດ  ທ່ານ ຊັກ ຊີຣັກ ແລະຕໍ່ທຸກໆສະຖາບັນການປົກຄອງຝຣັ່ງໄດ້ ທຳທຸກວິທີທາງເພື່ອຮັບປະກັນຄວາມຄົງຢູ່ ຂອງປະຊາຊົນເຫລົ່ານີ້ ແລະເພື່ອຄ້ຳປະກັນສິດທິພື້ນຖານ ຂອງປະຊາຊົນລາວດັ່ງທີ່ຣະບຸໄວ້ ໃນເນື້ອໃນຈິດໃຈ ຂອງອົງການບັນດາປະເທດທີ່ໃຊ້ພາສາຝຣັ່ງເສດ ແລະໃນຖແລງການສາກົນວ່າດ້ ວຍ ສິດທິມະນຸດຊຶ່ງ ສປປລາວກໍຮ່ວມເປັນພາຄີ.
- ຮ້ອງຂໍຕໍ່ສະຫາຣັດອະເມຣິກາ ແລະປະທານນະທິບໍດີອະເມຣິກັນ ທ່ານຊອກ ເດີບັນຢູ ບູຊ ຈົ່ງໄດ້ເອົາຄວາມຮັບຜິດຊອບ ທຸກຢ່າງໃນບັນຫານີ້ ແລະວາງມາຕະການ ເພື່ອຊ່ວຍຊີວິດຄົນຈຳພວກນີ້ໄວ້.
- ຮ້ອງຂໍຕໍ່ເວທີສາກົນ, ໂດຍສະເພາະ ສະຫະພາບຢູໂຣບ ແລະບັນດາ25ປະເທດພາຄີ,ພ້ອມທັງສະມາຄົມອາຊຽນ --ຊຶ່ງແມ່ນສປປລາວວ່າໜ້າທີ່ປະທານວຽນໃນປະຈຸບັນ-- ຈົ່ງໄດ້ເອົາມາຕະການຕາມທາງຄວນ, ບໍ່ວ່າຈະແມ່ນດ້ານການທູດ  ຫລືດ້ານເສດຖະກິດການຄ້າ,  ເພື່ອຊຸກຍູ້ໃຫ້ຜູ້ນຳສປປລາວຍຸດຕິການກະທຳອັນໂຫດຮ້າຍຕໍ່ຊາວລາວມົ້ງ, ເພື່ອໃຫ້ມີການນັບຖືສິດທິຊົນເຜົ່າແລະເລີ້ມປະຕິຮູບສູ່ປະຊາທິປະໄຕຢ່າງແທ້ຈິງໂດຍທັນທີ ໃນລາວ.
- ຮຽກຮ້ອງຢ່າງຮີບດ່ວນມາຍັງອົງການມະນຸສທັມສາກົນຕ່າງໆຈົ່ງໃຫ້ຟ້າວລົງມືວາງແຜນເຂົ້າໄປຊ່ວຍຊາວຊົນທີ່ລຳບາກຍາກແຄ້ນນີ້ດ້ວຍ.
- ຮຽກຮ້ອງມາຍັງອົງການນັກຂ່າວໜັງສືພິມ,  ໂດຍສະເພາະ"ອົງການນັກຂ່າວບໍ່ມີພົມແດນ",  ຈົ່ງໄດ້ຮີບເຄື່ອນໄຫວຊ່ວຍຊາວຊົນເຫຼົ່ານີ້ ທີ່ແມ່ນນັກຂ່າວສາກົນເອງ ເປັນຜູ້ເຜີຍເຖິງຊາຕາກັມ ອັນເສົ້າໂສກທໍຣະມານ.
- ຮຽກຮ້ອງໃຫ້ມີການປະທ້ວງ ຢູ່ຕໍ່ໜ້າສຖານທູດສປປລາວ ໃນຕ່າງປະເທດເພື່ອປະນາມການກະທຳອັນໂຫດຮ້າຍທາຣຸນຂອງຣະບອບຜະເດັດການຕໍ່ປະຊາຊົນ.

## PETITION DU MOUVEMENT LAO POUR LES DROITS DE L'HOMME

# *"Sauvons les Lao-Hmongs de Xaysomboun"*

**Le reportage "La guerre secrète au Laos", diffusé jeudi 16 juin 2005 dans l'émission de France 2 "Envoyé Spécial", a révélé au monde une campagne de répression féroce, voire d'extermination, menée en toute impunité depuis 30 ans par les dirigeants du parti unique au pouvoir en République démocratique Lao (RDPL), contre des milliers de populations lao-hmongs dans la jungle laotienne de Xaysomboune et de Bolikhamsay.**

**Les images de ces hommes, ces femmes, ces enfants, ces bébés, traqués, pourchassés par des soldats, vivant dans la peur, la maladie, le dénuement total et le désespoir ont suscité légitimement émotion, indignation et révolte. Et chacun se demande ici comment de telles horreurs, aient pu être commises dans un pays membre de la Francophonie, membre des Nations Unies, et avec lequel l'Union Européenne a signé en avril 1997 un accord de coopération qui faisait du respect des droits de l'Homme une condition majeure.**

**Il ressort en outre de ce reportage --réalisé clandestinement par le journaliste Grégoire DENIAU dans un pays sans liberté d'expression et de presse-- que pour le régime en place ces populations lao-mongs, qui refusent de se courber devant la dictature, "n'existent pas" et ne sont que de "simples villageois en déplacement". Larges sourires pour amadouer les donateurs et les touristes, mais refus de réformes démocratique et répression impitoyable contre toute opposition intérieure, ont été la règle de conduite des dirigeants du régime qui règnent en maîtres depuis 1975.**

**Il ressort aussi que, pour avoir servi dans les rangs de l'armée de l'Union française à l'époque de la bataille de Dien Bien Phu en 1954 puis sous les ordres de l'armée américaine durant la guerre du Vietnam, nombre de ces Lao-Hmongs souffrent le calvaire dans cette jungle aux côtés de leurs enfants, petits-enfants et arrières petits-enfants.**

**Face à cette situation inacceptable, et révoltés par de tels exactions à l'encontre d'une population innocente, les signataires :**

**- demandent solennellement aux autorités de la République Démocratique Populaire Lao de mettre fin immédiatement à la campagne de répression contre ces populations et de reconnaître publiquement leur existence;**
**- demandent aux autorités laotiennes de permettre, sans conditions et sans délais, aux organisation internationales d'accéder à ces populations en détresse pour leur fournir des aides humanitaires d'urgence;**
**- appellent les Nations Unies, et notamment son secrétaire général Kofi ANNAN, à prendre des mesures appropriées pour sauver ces populations Lao-Hmongs avant qu'il ne soit trop tard;**
**- appellent le président de la République française Jacques CHIRAC et l'ensemble des pouvoirs publics à tout faire pour assurer la survie de ces populations, et pour que soient respectés les droits du peuple laotien conformément aux valeurs de la Francophonie et aux principes de la Déclaration universelle des droits de l'Homme, auxquelles la RDPL a adhéré;**
**- appellent les Etats-Unis d'Amérique et son président George W. BUSH à prendre toutes leurs responsabilités dans ce dossier, et à prendre les dispositions pour venir en aide à ces personnes;**
**- appellent la communauté internationale --notamment l'Union Européenne et ses 25 membres, ainsi que l'ASEAN, dont le RDPL assure actuellement la présidence-- à prendre les mesures qui s'imposent, y compris diplomatiques et économiques, afin d'amener les autorités**

de la RDPL à cesser les exactions à l'encontre de ces Lao-Hmongs, de respecter les droits de toutes minorités, et d'entamer sans tarder des réformes démocratiques;
- adressent un appel pressant aux organisations humanitaires internationales à lancer des opérations d'urgence en vue de secourir ces populations en détresse;
- appellent les représentants de la presse, notamment l'association Reporters sans Frontières, à se mobiliser en faveur de ces personnes dont les tristes conditions ont été révélées grâce aux médias internationaux;
- appellent à des manifestations publiques devant les ambassades de la RDP Lao dans le monde, pour protester contre les exactions commises contre ces populations par le régime.

--------------







**MLDH - Communiqué du vendredi 16 septembre 2005**

# Plus de 10.000 signatures collectées

**La pétition, lancée par le Mouvement Lao pour les Droits de l'Homme (MLDH), suite à la diffusion le 16 juin 2005 par la télévision publique française d'un reportage sur la répression des populations Lao-Hmongs par le régime au pouvoir en République démocratique populaire Lao, a déjà recueilli plus de 10.000 signatures, trois mois jour pour jour après son lancement (…).**

**Toutefois, ce combat pacifique pour la liberté et la démocratie, et cette course contre la montre pour sauver ces populations ne sont pas encore gagnés. Le régime totalitaire au pouvoir au Laos continue d'ignorer les appels des signataires. Il continue de manier avec cynisme la langue de bois pour nier l'existence de ces Lao-Hmongs qui tentent de survivre dans les forêts, et continue de parler de "programme de déplacement de villageois".**

**Au niveau français, les démarches d'une trentaine de parlementaires comme celles d'organisations et de centaines de citoyens auprès du Quai d'Orsay, de Matignon et de l'Elysée n'ont rencontrées jusqu'ici que des réponses polies, convenues, sans engagements précis, ni promesse d'actions concrètes de la part de la France.**

**Au niveau international, des démarches ont été faites auprès des Nations Unies, des Etats-Unis d'Amérique, comme auprès de l'Union européenne, mais la procédure est bien lente et complexe, alors que des solutions humanitaires d'urgence sont nécessaires pour sauver ces milliers de Lao-Hmongs de la mort (...).**

## Voici un échantillon de messages des signataires:

- **André (France)**: ***"Ces gens se sont battus au cote des Français !!! C'est une obligation pour la France de s'en occuper avant qu'il soit trop tard "***
- **Nicole (Pays-Bas), étudiante**: ***"J'ai vu le documentaire et je pense qu'il est incroyable qu'une situation comme cela est toujours possible. Il est important d'aider les peuples et que la communauté internationale fera quelque chose!!"***
- **Jean-Luc (France), artiste peintre**: ***"Ayant un vrai comportement communiste, je suis écoeuré de voir la récupération de cette belle idéologie par des mégalos!! Le communisme n'est pas ce que font les salauds de ces pays"***
- **Lieven (Belgique), fonctionnaire**: ***"Toute la famille a été très émue par le reportage émis par Canvas, la 2ème chaîne de la VRT (Télévision flamande de Belgique) ce soir"*** (25/08/2005)
- **Mixay (Laos), étudiant** : ***"Le gouvernement du Laos (mon pays) est dictateur et il y a un seul parti unique dans le pays sans liberté de presse, ni démocratie comme la Chine, le Vietnam, la Corée du Nord et le Cuba"***
- **Julie (France), étudiante**: ***"AUCUN HOMME, AUCUN VIEILLARD, AUCUNE FEMME, ET AU NOM DE LA VIE, AUCUN ENFANT NE DOIT VIVRE CELA SI RIEN N'EST FAIT POUR QUE CELA CHANGE ALORS NOUS NE SOMMES PAS DIGNES D'ÊTRE APPELES HOMMES"***
- **Pascal (Canada), anthropologue**: ***"Que cesse enfin la répression et la terreur envers les populations minoritaires"***
- **Corinne LEPAGE, avocate, ancienne ministre (France):** ***"J'appelle de mes voeux et avec mes amis de CAP 21 l'action diplomatique de la France et les pressions de l'opinion internationale pour faire cesser de telles barbaries dont on se demande comment elles peuvent encore subsister de nos jours dans l'indifférence quasi-générale de nos gouvernants".***
- **Samuel (Canada), agriculteur**: ***"ce peuple mérite la liberté, j`espère que ma modeste signature fera bouger les choses."***
- **Thierry (France), maître peintre**: ***"je suis scandalisé à savoir que de nos jours un peuple est isolé, massacré et meurt de faim, hommes, femmes et enfants. Ils sont livrés à eux mêmes; lâchés par le gouvernement Français comme celui des états unis, c'est inhumain les mots sont insuffisants pour exprimés ma honte et mon dégoût devant une telle situation. je demande aux gouvernements respectifs laotien et vietnamien de laisser vivre ces êtres humains de ne pas les torturer, les traiter comme ils traitent les chiens. Jamais je vous laisserais de côté peuple Hmong je me battrais pour vous aider du mieux que je le peux et le pourrais".***
- **Benjamin (Belgique), étudiant en journalisme**: ***"M'étant moi même rendu par le passé dans ce magnifique pays qu'est le Laos; je m'indigne encore plus de ce génocide passé jusqu'il y a peu sous silence, au niveau international mais aussi au sein même de la population Lao. Le gouvernement actuellement en place ne respecte pas les droits élémentaires des hommes en général et des minorités en particulier! Espérons que le mouvement de contestation mis au devant de la scène internationale, puisse réussir à endiguer au plus vite ce massacre primaire, indigne du fier peuple Lao"***
- **Graig (Canada), enseignant**: ***"My family and I will support the Hmongs decision all the ways until we could go back to our country"***
- **Sans nom (France, 29/07/2005), citation du Pasteur Martin Niemöller**: ***"Ils sont d'abord venus chercher les juifs, et je n'ai pas protesté, car je ne suis pas juif. Puis, ils sont venus chercher les communistes, et je n'ai pas protesté, car je ne suis pas communiste. Puis, ils sont venus chercher les syndicalistes, et je n'ai pas protesté, car je ne suis pas syndiqué. Puis ils sont venus chercher les catholiques, et je n'ai pas protesté, car je suis protestant. Mais quand ils sont venus me chercher, personne n'a protesté, car il ne restait plus personne".***

# ຂ່າວການເຄື່ອນໄຫວ ຂ.ລ.ສ.ມ.

ໃນຣະຍະຜ່ານມານີ້ ຂະບວນການລາວ ເພື່ອສິດທິມະນຸດ ໄດ້ສືບຕໍ່ເພີ່ມທະວີການເຄື່ອນໄຫວເພື່ອເສຣີພາບປະຊາທິປະໄຕໃນລາວ. ເຫັນໄດ້ຈາກຖແລງການ ແລະລາຍງານຕ່າງໆ40ກວ່າສະບັບ ແຕ່ທ້າຍປີ 2004ມາ. ການເຄື່ອນໄຫວສຳຄັນໆພໍທົບທວນໄດ້ດັ່ງນີ້: ໃນວັນທີ 30ພຶສະຈິກາ 2004, ນັບວ່າເປັນຄັ້ງທຳອິດ ທີ່ໄດ້ມີການສາຽພາບ ທີ່ສະພາຕ່ຳຝຣັ່ງ, ເຖິງການລ້າງຜານຊາວ ລາວມົ້ງໂດຽກອງທັບສ.ປ.ປ.ລ. ຂະບວນການລາວ ເພື່ອສິດທິມະນຸດໄດ້ເຜີຽແຜຄວາມໂຫດຮ້າຽດັ່ງກ່າວໂດຽການຮ່ວມມືຈາກນັກຂ່າວຊາວອັງກິດ ຮູຣີ ຣາມິດ ແລະມິຊາ ມັສເຊຟ, ທີ່ໄດ້ໄປເກັບກຳຂ່າວດ້ວຽຕົນເອງ ໃນແຂວງ ບໍລິຄຳໄຊ. .ສເມີມາ, ຂລສມໄດ້ສະແດງຄວາມວິຕົກກັງວົນຕໍ່ສະພາບການຂອງຊາວລາວມົ້ງ ທີ່ ຖືກກອງກຳລັງທະຫານ ສປປລ ຕາມລ້າ, ລ້າງຜານໃນ ດົງຫນສປ່າຕອບທີ່ເຂດພິເສດໄຊສົມບູນ ແລະແຫ່ງອື່ນໆ. ຂະບວນການລາວເພື່ອສິດທິມະນຸດ ໄດ້ອອກຖແລງການຫຼາຍສະບັບ, ເຊັ່ນສະບັບລົງວັນທີ 27 ແລະ30 ພຶສະຈິກາຮຽກຮອງໃຫ້ກຸ່ມ ປະເທດອາຊຽນ, ອົງການສະຫະປະຊາຊາດ, ສະຫະພາບຢູໂຣບແລະກຸ່ມປະເທດ ທີ່ໃຫ້ການຊ່ວຽເຫຼືອ ຜັກດັນໃຫ້ທາງການສ.ປ.ປ.ລ ຢຸດຕິ ການຂ້າໂຫດດັ່ງກ່າວ - ໃນວັນທີ 17ມົກກະຣາ2005 ທີ່ສຳນັກງານໃຫຍ່ສະຫະປະຊາຊາດ ກຸງນິວຢອກ ປະທານຂລສມ ພ້ອມຄນະ ກໍໄດ້ກ່າວປະນາມການບໍ່ນັບຖືສິດທິຂອງສັດຕຣີໃນສ.ປ.ປ.ລ ຕໍ່ກັມມາທິການສົນທິສັນຍາ "ວ່າດ້ວຽການລົບລ້າງການ ແບ່ງແຍກສິດທິຂອງສັດຕຣີ". ໃນໂອກາດນີ້, ປະທານຂະບວນການຍານາງວານິດາ ເທພສຸວັນ ຍັງໄດ້ຖແລງວ່າ: "ຕາບໃດຫາກບໍ່ມີຄວາມແຈ້ງຂາວໃນການບໍຣິຫານປະເທດ, ຕາບໃດ ຫາກບໍ່ມີການປະຕິຮູບສູ່ເສັ້ນທາງ ເສຣີພາບປະຊາທິປະໄຕ, ຊີວິດການເປັນຢູ່ ຂອງສັຕຣີໃນສ.ປ.ປ.ລ, ກໍຈະບໍ່ມີຫຍັງ ທີ່ຈະດີຂຶ້ນ". ນອກນັ້ນ ຂລສມ ຍັງໄດ້ທວງຕໍ່ອົງການ ສະຫະປະຊາຊາດ ໃຫ້ວາງເງື່ອນໄຂ ຊຸກຍູ້ຖູໄຖ ໃຫ້ທາງການ ສ.ປ.ປ.ລ ປັບປຸງ ສະພາບການເປັນຢູ່ຂອງສັດຕຣີ, ໂດຽສະເພາະຕາມເຂດຊົນນະບົດແລະເພື່ອສັຕຣີທີ່ຖືກຍົກຍ້າຍຈາກທີ່ພຳນັກອາສັຍເດີມ, ເປີດໂອກາດໃຫ້ສັຕຣີສາມາດປະກອບສ່ວນໄດ້ ໃນລະບອບການປົກຄອງ ແບບເສຣີພາບແລະປະຊາທິປະໄຕ. ວັນທີ 21ແລະ22 ກຸມພາ2005 ທີ່ກຸງເຊີແນວ ຂະບວນການລາວ ເພື່ອສິດທິມະນຸດ ກໍໄດ້ຖືກເຊີນຮ່ວມກອງປະຊຸມ ສົນທິສັນຍາ "ວ່າດ້ວຽການລົບລ້າງການແບ່ງແຍກ ເຊື້ອຊາດເຜົ່າພັນ" ແຫ່ງອົງການສະຫະປະຊາຊາດ ອັນເອີ້ນກັນວ່າ CERD. ຕໍ່ໜ້າຄະນະນັກຊ່ຽວຊານດັ່ງກ່າວນີ້, ຍານາງ ວານິດາ ໄດ້ຍົກເອົາ ບັນຫາຂອງຊາວເຜົ່າມົ້ງທີ່ເຂດພິເສດໄຊສົມບູນ ແລະບໍຣິຄຳໄຊ ຂຶ້ນມາເປີດເຜີຽ ພ້ອມທັງຮຽກຮ້ອງ ໃຫ້ອົງການສະຫະປະຊາຊາດ ສົ່ງນັກສັງເກດການ ເຂົ້າໄປສຳຫຼວດເຖິງສະພາບຕົວຈິງ ຂອງຊາວລາວມົ້ງເຫຼົ່ານີ້. ການເຄື່ອນໄຫວຂອງ ຂລສມ ທີ່ກອງປະຊຸມ CERD ຄັ້ງນີ້, ເປັນໂອກາດຄັ້ງທຳອິດ ທີ່ໄດ້ຍິນໄດ້ຟັງ ຄນະຊ່ຽວຊານສາກົນກ່າວຢ້ຳວ່າ"ຄວາມຖືກຕ້ອງປອງດອງຊາດ" ເປັນເງື່ອນໄຂດຽວເທົ່ານັ້ນ ທີ່ຈະສາມາດຊ່ວຍແກ້ໄຂ ບັນຫາໃນລາວ.

ຂະບວນການລາວເພື່ອສິດທິມະນຸດຍັງໄດ້ສະແດງຄວາມກັງວົນຕໍ່ການລະເມີດສິດທິທາງສາສນາ ໃນສປປລ ຢ່າງເນື່ອງນິດ. ແຕ່ລະຄັ້ງທີ່ມີການປາບປາມ, ຈັບກຸມຄຸມຂັງຊາວ ຄຣິສຈຽນ, ຂລສມກໍ ໄດ້ປະນາມການກະທຳດັ່ງກ່າວຂອງທາງການສ.ປ.ປ.ລໃນທັນທີທັນໃດ. ດັ່ງຖແລງການສະບັບລົງວັນທີ 1 ເມສາ ທີ່ຜ່ານມາ ໃນນັ້ນຂລສມ ໄດ້ກ່າວປະນາມ ຕໍ່ການລະເມີດ ສິດທິທາງສາສນາ ໂດຍຢ້ຳວ່າ ການປະພຶດຂອງທາງການ ສ.ປ.ປ.ລ ບໍ່ກົງກັບຄຳເວົ້າຂອງຕົນ ທີ່ອ້າງສເມີວ່າ "ມີການ ນັບຖືສິດທິມະນຸດໃນສ.ປ.ປ.ລ". ພາຽຫຼັງທີ່ຊາວຄຣິສຈຽນ 10ຄົນຖືກ ເຈົ້າໜ້າທີ່ຈັບຕົວແລະທໍລະມານ ທີເມືອງພິນ ແຂວງສວັນນະເຂດ ໃນໂອກາດສເລີມສລອງບຸນປາສກາ, ຂລສມ ກໍໄດ້ຮຽກຮ້ອງ ໃຫ້ທາງການ ສ.ປ.ປ.ລ ປ່ອຽຕົວ ຜູ້ຖືກຈັບ ທັງ

ໝົດ, ພ້ອມຍັງໄດ້ທວງໃຫ້ປະຊາຄົມສາກົນ ພິຈາຣະນາ ຄືນໃໝ່ ເຖິງເງື່ອນໄຂ ຂອງການພົວພັນກັບ ສ.ປ.ປ.ລ. ໃນໂອກາດກອງປະຊຸມວ່າດ້ວຍ "ອິດສະຣະພາບທາງການ ເມືອງ ແລະສາສນາ ໃນກຸ່ມປະເທດອາຊຽຄອມມູນິສ", ຄັ້ງວັນທີ 29 ມົກະຣາ ທີ່ເມືອງ ຕູແຣງ ປະເທດ ອີຕາລີ ຂລສມ ກໍຍັງໄດ້ປະທ້ວງ ເຖິງການລະເມີດສິດທິ ທາງ ສາສນາ ຈາກຜູ້ນຳພັກລັດ. ນອກຈາກນັ້ນແລ້ວ, ກໍຍັງມີ ຖແລງການຫຼາຍໆສະບັບ, ໂດຽສະເພາະ ສະບັບລົງວັນທີ 15 ມົກະຣາ 2005, ທີ່ມີຫົວຂໍ້ວ່າ "ເດືອນທັນວາ ອັນມືດມົນ ຂອງຊາວຄຣິສຈຽນໃນສ.ປ.ປ.ລ", ອັນໝາຽ ເຖິງການປາບປາມ ຜູ້ຖືສາສນາພະເຍຊູ ໂດຽທາງການ ສ.ປ.ປ.ລ, ເຊັ່ນທີ່ເມືອງໄຊທານີ ແລະເມືອງສີໂຄດຕະ ບອງ ແຂວງວຽງ ຈັນ, ທີ່ເມືອງສຳພັນ ແຂວງຜົ້ງສາລີ, ເມືອງນ່ານ ແຂວງຫຼວງພະບາງດັ່ງນີ້ເປັນຕົ້ນ. ໃນທ້າຍ ເດືອນມີນາ ປະທານ ຂລສມ ກໍຍັງໄດ້ຖືກເຊີນເປັນກຽດ ໃນກອງປະຊຸມປະຈຳປີ ຂອງກັມມາທິການ ສິດທິມະນຸດ ຂອງອົງການສະຫະປະຊາຊາດທີ່ນະຄອນເຊີແນວ, ອັນ ໄດ້ເປັນໂອກາດອີກໃຫມ່ ເພື່ອທົບທວນເຖິງ ການຢຽບຢ່ຳ ສິດທິະພື້ນຖານ ຂອງປະຊາຊົນລາວຈາກ ຜູ້ນຳພັກໂທນ ໃນສປປລາວໄດ້ເກືອບສາມສິບປີມາແລ້ວ. ໃນທ້ອງເດືອນ ມິຖຸນາກໍແມ່ນການເຄື່ອນໄຫວເພື່ອຊ່ວຍກູ້ຊີວິດຊາວລາວ ມົ້ງໃນເຂດໄຊສົມບູນ. ຂລສມກໍໄດ້ເປີດເຊັນສານປະທ້ວງ ຮັບໂຮມລາຍເຊັນ ໄດ້ກວ່າສິບພັນ ລາຍເຊັນແລ້ວ ເພື່ອ ຮຽກໃຫ້ທາງການລາວຢຸດຕິການກະທຳ ອັນເລວຊາມດັ່ງ ກ່າວແລະຮຽກຮ້ອງເວທີສາກົນ ໃຫ້ຊ່ວຍຊີວິດຊາວລາວ ດັ່ງກ່າວ ໂດຍຮີບດ່ວນ. ຂລສມ ກໍ ໄດ້ຮ່ວມ ຮຽກປະທ້ວງ ໃນວັນທີ່ 25ມິຖຸນາ ທີ່ລານ "ຕະໂຣກາເດໂຣ" ທີ່ນະຄອນ ປາຣີພ້ອມທັງ ສນັບສນູນຮ່ວມປະທ້ວງຈັດໂດຍ ສະມາຄົມ ເພື່ອນມົ້ງໃນວັນທີ່ 24 ກັນຍາ ຕື່ມອີກ. ໃນວັນທີ່ 12 ກັນຍາ, ຜູ້ຕາງໜ້າ ຂລສມ ນຳໂດຍ ຍານາງ ວານິດາ ເທພສຸວັນ ກໍໄດ້ຖືກເຊື້ອເຊີນ ຮ່ວມກອງປະຊຸມປາທະຄະ ຖາ ຈັດໂດຍອະນຸກັມມາທິການສິດທິມະນຸດຂອງຣັຖສະພາ ຮ່ວມຢຸໂຣບເຖິງສະພາບການເສຖກິດ ສັງຄົມ ການເມືອງ ແລະ ສິດເສຣີພາບ ໃນປະເທດລາວ, ວຽດນາມ ແລະ ຂເມນ ສາມສິບປີ ຫຼັງການສິ້ນສຸດ ສົງຄາມວຽດນາມ. ຂລສມ ກໍໄດ້ຖືໂອກາດນີ້ ສເນີຂໍ້ມູນຫຼັກຖານຕົວຈິງຢ່າງ ຄົບຖ້ວນແຈ້ງໃຫ້ຜູ້ແທນຢູໂຣບ ຮູ້ເຫັນເຖິງບັນຫາລາວ ແລະ ຊ່ວຍຊອກທາງແກ້ໄຂ ເພື່ອຊຸກຍູ້ການປ່ຽນແປງ ສູ່ເສຣີພາບ ປະຊາທິປະໄຕ ແລະ ຄວາມປອງດອງຊາດ ໃນລາວ. ນອກນີ້ ໃນທຸກໂອກາດຂລສມ, ຍັງໄດ້ສືບຕໍ່ທວງ ຖາມເຖິງຊາຕາກັມຂອງ ບັນດານັກໂທດການເມືອງ ໃນ ລາວໂດຍ ສະເພາະ ເຖິງຄະນະຜູ້ນຳຂະບວນນັກສຶກສາຄູ ອາຈານລຸກຮື້ 26ຕຸລາ 1999. ໃນໂອກາດຄົບຮອບຫົກປີ ຂອງວີຣະກັມ 26 ຕຸລານີ້ ຂລສມ ກໍ່ໄດ້ຮັບໂຮມລາຍເຊັນ ຜູ້ແທນຢູໂຣບ ສົ່ງທວງຕໍ່ຜູ້ນຳສປປລາວເພື່ອຮຽກການປ່ຽ ຕົວທ່ານ ທອງປະເສີດ ເກື້ອກູນ, ແສງອະຣຸນ ແພງພັນ, ບົວວັນ ຈັນມະນີວົງແລະເກົ້າໃຈ ແລະປະນາມພຶຕຕິ ການ ຂອງຜູ້ນຳພັກໂທນ ໃນການເສັຽຊີວິດໃນຄຸກຄຸມຂັງ ຂອງທ່ານຄຳພູວຽງ ສີສະອາດ. ປະທານຂລສມ ກໍຍັງ ໄດ້ເດີນທາງສູ່ອີຕາລີ ເພື່ອຮ່ວມຊຸມນຸມປະທ້ວງທີ່ເມືອງ ຕູແຣງແລະເມືອງແຊນແຕ່ວັນທີ່26ເຖິງ28ຕຸລາ ຮ່ວມ ກັບນັກປະຊາທິປະໄຕຊາວອີຕາລີແລະຊາວຢູໂຣບຕື່ມອີກ.

---

*ເພີ່ນວ່າ* ຊົນຊາວລາວ ບໍ່ຕ້ອງ ຊອກໄຝ່ເສຣີ
ເພາະພັກ-ລັດ ພາທາງ ແນບນຳເຍືອງແຈ້ງ
*ຂ້ຽວ່າ* ຊົນຊາວລາວ ຄວນທ້ວງ ທວງເອົາເສຣີພາບ
ຊ່ວຍຊາດລາວ ໃຫ້ພົ້ນ ຄົນຮ້າຍເຫຼົ່າມານ

# ສາຣະຄະດີ: "ກະແສຟອງປະຊາທິປະໄຕຍັງສືບຕໍ່ໃນໂລກ"

ກະແສຟອງປະຊາທິປະໄຕທີ່ລິເລີ້ມໃນທ້າຽທົດສະວັດ80 ຫຼັງຈາກການພັງທະລາຽຂອງກຳແພງເມືອງແບກແລງ ຍັງສືບຕໍ່ ແລະພັດຜ່ານອະດີດປະເທດຄອມມູນິດ ດັ່ງຈະເຫັນໄດ້ໃນເຫດການທີ່ ປະເທດເຊອອກເຊັຽ, ຢູກະແຣນ, ກີກກີສຖານ,ພາຄີອະດີດສະຫະພາບໂຊວຽດ, ແລະໃນປະເທດລີບັງ ທີ່ຖືກຄວບຄຸມຈາກກຳລັງທະຫານຂອງປະເທດໃກ້ຄຽງ ມາເປັນເວລາ 29 ປີ. ເປັນໜ້າສັງເກດວ່າ ໃນທຸກໆ ເຫດການທີ່ກ່າວມານີ້, ໃນທຸກປະເທດ ກໍແມ່ນການຊຸມນຸມປະທ້ວງຂອງປະຊາຊົນ ພາຽໃນແຕ່ລະປະເທດ, ແລະການອູ້ມຊູ ຈາກກຸ່ມປະເທດເສຣີ ໂດຽສະເພາະສະຫະຣັດອະເມຣິກາ ແລະ ສະຫະພາບຢູໂຣບ ທີ່ນຳພາໃຫ້ມີການປ່ຽນແປງທາງການເມືອງ ສູ່ ເສຣີພາບ, ປະຊາທິປະໄຕ ແລະຄວາມປອງດອງຊາດ.

- ໃນຂະບວນ *"ປະຕິວັດດອກກຸຫຼາບ" (Révolution de la rose)* ທີ່ປະເທດ ເຊອອກເຊັຽ ໃນທ້າຽປີ 2003 ກໍແມ່ນການເຄື່ອນໄຫວແບບດັດດ່ຽວຂອງຊາວເຊອອກເຊັຽຫຼາຽສິບພັນຄົນ, ທີ່ຮ່ວມຊຸມນຸມເດີນຂະບວນເປັນເວລາຫຼາຽວັນທີ່ເມືອງຫຼວງ "ຕະບີລີຊີ" ທີ່ໄດ້ນຳພາໃຫ້ປະທານ ເຊີວາກນາເຊ ຍອມຮັບວ່າ ຝ່າຍຣັຖບານ ໄດ້ປອມແປງ ຄະແນນເລືອກຕັ້ງສະພາ. ແມ່ນການຊຸມນຸມຂອງປະຊາຊົນນີ້ເອັ່ນກັນທີ່ໄດ້ນຳສູ່ໄຊຊນະເລືອກຕັ້ງຂອງທ່ານ ມີຄາຽ ຊາກາສວີລີ ໃນວັນທີ 4 ມົກກະຣາ 2004.

- ໃນການ *"ປະຕິວັດສີໝາກກ້ຽງ"* (révolution orange) ທີ່ປະເທດ ຢູກະແຣນ ໃນເດືອນ ພຶສຈິກາ ແລະ ທັນວາ 2004, ກໍຍັງແມ່ນ ການຊຸມນຸມປະທ້ວງແບບເປັນປຶກແຜ່ນແໜ້ນໜາທີ່ນະຄອນຫຼວງ "ກີເອຟ" ທີ່ເປັນສາຍຂະບວນຊຸກຍູ້ການປ່ຽນແປງທາງການເມືອງ. ການທີ່ປະຊາຊົນຢູກະແຣນຫຼາຍສິບພັນຄົນໄດ້ຊຸມນຸມ ປະທ້ວງ ທັງວັນທັງຄືນ ໄດ້ນຳພາໃຫ້ມີການເລືອກຕັ້ງປະທານາທິບໍດີໃໝ່ພາຽໃຕ້ການກວດກາສາກົນ. ການລຸກຮື້ແບບສັນຕິວິທີຂອງປະຊາຊົນຢູກະແຣນ ໄດ້ເປັນກະແສຟອງພັດເປົ່າອັນຍາດສິນທັມຂອງທ່ານ ວິກຕໍ ອີອາບູໂກວິສ ໃຫ້ພັງທະລາຽແລະເປີດທາງໃຫ້ຜູ້ນຳຝ່າຽຄ້ານ ທ່ານ ວິກຕໍ ອີອູສເຊງໂກ ຖືກເລືອກເປັນປະທານປະເທດ ແລະ ເຂົ້າຄອງຕຳແໜ່ງ ໃນມື້ວັນທີ 22 ມົກກະຣາ 2005.

- ໃນທ້າຽເດືອນມີນາ ທີ່ຜ່ານມານີ້ ເຫດການ ທີ່ຄ້າຽຄຽງກັນນີ້ກໍໄດ້ເກີດຂື້ນອີກທີ່ ປະເທດ ກີກກີສະຖານ, ທີ່ເປັນອະດີດພາຄີສະຫະພາບໂຊວຽດ. ເພື່ອປະນາມການປອມແປງການເລືອກຕັ້ງສະພາພູ້ແທນ ປະຊາຊົນກີກກີສະຖານໄດ້ເປີດປະທ້ວງ ໃນຫຼາຍແຂວງຂອງປະເທດ. ແລະໃນວັນ ທີ 24 ມີນາ ການຊຸມນຸມປະທ້ວງຂອງຊາວເມືອງຫຼວງ "ບິສເກັກ" ບໍ່ພໍເທົ່າໃດພັນເທົ່ານັ້ນ, ກໍພຽງພໍເພື່ອຂັບໄລ່ປະທານ ອາສກາກ ອາກາເຢຟ ຈາກຕຳແໜ່ງ ເພື່ອເປີດການເລືອກຕັ້ງປະທານປະເທດ ໃນເດືອນມິຖຸນາທີ່ຜ່ານມາ. ເຫດການທີ່ ກີກກີສະຖານ ນີ້ ຍັງໄດ້ເຜີຽແບໃຫ້ເຫັນເຖິງ ການບໍຣິຫານປະເທດ ແບບອະທັມຂອງປະທານ ອາກາເຢຟ ທີ່ໄດ້ສ້າງຮັ່ງຄູນມີແກ່ຄອບຄົວຂອງຕົນເອງແລະວຸ້ນເຈື້ອເຊື້ອສາຍ ໂດຽຄອບຄຸມທຸຣະກິດສຳຄັນຕ່າງໆຂອງປະເທດ, ແລະປະປ່ອຽໃຫ້ປະຊາຊົນ ຢູ່ໃນຄວາມ ທຸກຍາກຂາດເຂີນ.

- ສ່ວນເຫດການທີ່ປະເທດລີບັງ ທີ່ຮ້ອງກັນວ່າ *"ປະຕິວັດກົກແຊດເຣີ"* (ອັນເປັນກົກໄມ້ສັນຍາລັກຂອງປະເທດ) ກໍຍັງແມ່ນປະຊາຊົນພາຍໃນປະເທດເອງ ທີ່ໄດ້ຮ່ວມພະລັງແບບກ້າຫານເປັນກຳລັງ ເພື່ອຮຽກຫວງການປ່ຽນແປງ. ການເຄື່ອນໄຫວຂອງຊາວລີບັງກ່ວາແສນຄົນ ທີ່ໄດ້ຊຸມນຸມປະທ້ວງຫຼາຍມື້ຕິດຕໍ່ກັນທີ່ເມືອງຫຼວງ "ເບຣຸດ" ເພື່ອທວງໃຫ້ກຳລັງທະຫານູ່າງດ້າວຈາກຊີຣີ ຖອນອອກຈາກ ລີບັງ ໄດ້ບັນລຸຜົນສຳເຣັດ. ປະເທດຊີຣີ ຊຶ່ງຄວບຄຸມ ລີບັງ ໂດຽກຳລັງທະຫານມາແຕ່ປີ 1976 ກໍຈຳເປັນຕ້ອງຮັບຖອນທະຫານ 14 ພັນຄົນ ພ້ອມດ້ວຽກຳລັງຕຳຣວດລັບ ຂອງຕົນກັບຄືນ ຊີຣີ ໃຫ້ສຳກ່ອນການເລືອກຕັ້ງເສຣີ ໃນເດືອນພຶສພາ ໜ້າ. ທັ້ງໆທີ່ຜູ້ນຳຊີຣີ ໄດ້ປະກາດຕລອດມາວ່າຊາ

ຕາກັມຂອງຊີຣິແລະລີບັງ ຢູ່ໃນລັກສນະຕິດມັດຣັດແໜ້ນ ແລະບໍ່ມີສິ່ງໃດທີ່ຈະມາຕັດຂາດໄດ້...

- ຂໍ້ສັງເກດສຳຄັນທີ່ພໍຖອດຖອນໄດ້ຈາກເຫດການ ໃນສີ່ປະເທດທີ່ກ່າວມານີ້ກໍມີຢູ່ວ່າ: ນຶ່ງ, ກະແສຟອງປະຊາທິປະໄຕ ຍັງບໍ່ທັນສິ້ນສຸດເທື່ອ ແລະອາດຈະພັດເປົ່າໄປຕໍ່ໃນບັນດາປະເທດ ທີ່ຍັງມີການປົກຄອງ ແບບຜະເດັດການ, ຂາດສິນທັມ, ຂາດເສຣີພາບ ແລະສິດທິມະນຸດ. ສອງ, ການເຄື່ອນໄຫວ ແບບເປັນປຶກແຜ່ນຂອງປະຊາຊົນພາຽໃນປະເທດເປັນຊ່ອງທາງເພື່ອຊຸກຍູ້ການປ່ຽນແປງ ແນວທາງການເມືອງແລະຊຸກຍູ້ໃຫ້ມີການປ່ຽນຜູ້ນຳທີ່ບໍຣິຫານປະເທດແບບຂາດຍຸຕິທັມ. ສາມ, ເຫດການໃນປະເທດລີບັງ ຊີ້ໃຫ້ເຫັນວ່າ ການລຸກຮື້ຂອງປະຊາຊົນ ແບບເດັດດ່ຽວ ກ້າຫານສາມາດຂັບໄລ່ກຳລັງທະຫານຂອງມະຫາອຳນາດທ້ອງຖິ່ນ ອອກຈາກປະເທດຕົນໄດ້ ເຖິງວ່າຈະມີສັນຍາ ສຳພັນພິເສດມານານ ເຖິງ 29ປີ ແລ້ວກໍຕາມ.ສີ່, ແມ່ນການສແດງບົດບາດ ຈາກປະຊາຊົນ ໂດຽຖືເອົາພົລເມືອງ ພາຽໃນເປັນ ກຳລັງຫຼວງເທົ່ານັ້ນ ທີ່ສາມາດສ້າງສະພາບການ ເພື່ອໃຫ້ມີການສນັບສນູນ ຈາກເວທີສາກົນ ໂດຽສະເພາະ ຈາກກຸ່ມປະເທດຕາວັນຕົກ ແລະຈາກກຳລັງຝ່າຍຄ້ານໃນນອກປະເທດ ເພື່ອຮ່ວມແຮງ ແປງທາງການປ່ຽນແປງອັນແທ້ຈິງ ສູ່ເສຣີພາບ, ປະຊາທິປະໄຕ, ຍຸຕິທັມໃນສັງ ຄົມ ແລະ ຄວາມ ຖືກຕ້ອງ ປອງດອງຊາດ.

ສິດທິ ເປັນຂອງລ້ຳ ຊາວໂລກສແວງຫາ
ເປັນຫຍັງ ຊຸມຊາວລາວ ບໍ່ຄ່ອຍເຄີຍມີໃຊ້
ເຊື່ອຖື ຂຽນຂີດເວົ້າ ຊຸມນຸມຕິກ່າວ
ມີແຕ່ ແນວເພີ່ນຫ້າມ ບໍ່ເຄີຽກ້າຝ່າຝືນ

ສາມສິບປີ ຜ່ານພົ້ນ ທີ່ລາວຂາດເສຣີ
ເຖິງຄາວ ລາວທັງມວນ ດ່ວນທາວທວງຮ້ອງ
ປະສານງານ ເປັນກ້ອນ ນອກໃນພ້ອມພ່ຳ
ແນ່ວ່າ ສິດເສຣີສ່ວນລ້ຳ ຈະມີແທ້ແກ່ລາວ.

ທ່ານສາມາດອ່ານຂໍ້ມູນຂ່າວ, ລາຍງານ, ຖແລງການໄດ້ທີ່ຫ້ອງຂ່າວອິນເທີແນັດ ຂລສມ ທີ່:

**Mouvement Lao pour les Droits de l'Homme ( MLDH)**
**Lao Movement for Human Rights ( LMHR)**
**BP 123 - 77206 Torcy Cedex, France - Téléphone/Fax : 33 (0) 1 60 06 57 06**
**e-mail : mldh@mldh-lao.org**

# ພາບຂ່າວການເຄື່ອນໄຫວສ່ວນນຶ່ງຂອງຄນະຜູ້ນຳຂລສມໃນຣະຍະທີ່ຜ່ານມາ





05/06/04 - ຜູ້ນຳຣາຊວົງສ໌ລາວ ໃຫ້ກຽດຮ່ວມງານຣາຕຣີ ຂລສມ ຮັບຕ້ອນ ຍານາງຊິລວັຽ ແລະ ທ່ານ ແມນລາໂນ



ປາຣີ 30/11/04: ທີ່ສະພາຜູ້ແທນສາຍຣູນພາບກຸ່ມລາວມົ້ງ



ນິວຢອກ-ONU-17/01/05:ປະຊຸມກັມມາທິການສິດທິສັຕຣີ




ຕູແຣງ (ອີຕາລີ) 29/1/05:ຮ່ວມປາທະຄະຖາບັນຫາລາວ



ເຊີແນວ - ONU-21/02/05: ປະຊຸມບັນຫາສິດທິຊົນເຜົ່າ



ເຊີແນວONU-30/03/05:ສເນີສະພາບສິດທິມະນຸດໃນລາວ




ບຣູແຊລ12/09/05: ປະຊຸມສະພາຢູໂຣບເຖິງບັນຫາລາວ